**ມິຊຊາອາທິດທີ 5 ກຳນົດທຳມະດາ ປີ A**

**ວັນທີ 9 ກຸມພາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 5, 13-16**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກສາວົກວ່າ: ພວກເຈົ້າເປັນເກືອຂອງແຜ່ນດິນ. ຖ້າວ່າເກືອຫາກເສຍລົດເຄັມໄປແລ້ວຈະເອົາຫຍັງມາເຮັດໃຫ້ມັນເຄັມໄດ້ອີກ? ມັນກໍໃຊ້ການບໍ່ໄດ້ແລ້ວ ມີແຕ່ເອົາໄປຖອກຖິ້ມຢູ່ນອກໃຫ້ຄົນຢຽບຢ່ຳເທົ່ານັ້ນ.

ພວກເຈົ້າເປັນຄວາມສະວ່າງຂອງໂລກ. ເມືອງທີ່ຕັ້ງຢູ່ຈອມພູຈະບັງໄວ້ບໍ່ໄດ້. ມີໃຜໄຕ້ຕະກຽງແລ້ວຈະເອົາຖັງມາກວບໄວ້? ແຕ່ວ່າເມື່ອໄຕ້ແລ້ວກໍເອົາຫ້ອຍໃສ່ຂໍ ເພື່ອໃຫ້ທຸກຄົນໃນເຮືອນເຫັນຮຸ່ງ.

ດັ່ງນີ້, ຄວາມສະວ່າງຂອງພວກເຈົ້າກໍຕ້ອງຮຸ່ງແຈ້ງຕໍ່ໜ້າຄົນທັງຫລາຍ. ເພື່ອວ່າເມື່ອພວກເຂົາເຫັນກິດຈະການດີຂອງພວກເຈົ້າແລ້ວເຂົາຈະໄດ້ສໍລະເສີນພຣະບິດາເຈົ້າຜູ້ສະຖິດຢູ່ສະຫວັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 5, 13-16**

ອາທິດທີ່ຜ່ານມາ, ນັກບຸນມັດເທວໄດ້ບັນລະຍາຍໃຫ້ພວກເຮົາຮູ້ເຖິງຄຳສອນຂອງພຣະເຢຊູເຈົ້າຢູ່ເທິງພູເຂົາ ກ່ຽວກັບບຸນມະຫາລາບແປດປະການ. ຫລືຮຽກອີກຊື່ໜຶ່ງວ່າ ຄວາມສຸກແປດປະການນັ້ນເອງ. ເນື້ອໃນໃຈຄວາມຂອງ ບຸນມະຫາລາບແປດປະການນີ້ແມ່ນສິ່ງທີ່ພຣະເຢຊູເຈົ້າເອງໄດ້ປະຕິບັດຕະຫລອດເວລາທີ່ພຣະອົງຊົງຊີວິດແລະເທດ ສອນໃນແຜ່ນດິນນີ້. ຖ້າຜູ້ໃດຢາກເປັນສິດຂອງພຣະອົງ, ຢາກເດີນຕາມພຣະອົງ, ຜູ້ນັ້ນຕ້ອງພະຍາຍາມປະຕິບັດ ຕາມຄຳສອນແປດປະການນີ້ຂອງພຣະອົງ. ເພື່ອເຂົາຈະໄດ້ເປັນເໝືອນພຣະອົງຄືເປັນຜູ້ສັກສິດ ດັ່ງພຣະບິດາຢູ່ ສະຫວັນເປັນຜູ້ສັກສິດ. ສ່ວນວາຈາພຣະເຈົ້າທີ່ພວກເຮົາໄດ້ຟັງວັນນີ້ ເປັນຕອນທີ່ຕໍ່ຈາກຄຳສອນກ່ຽວກັບບຸນມະຫາ ລາບແປດປະການ.

ວັນນີ້ພຣະເຢຊູເຈົ້າກ່າວກັບພວກເຮົາວ່າ: *« ພວກເຈົ້າເປັນເກືອຂອງແຜ່ນດິນ »*. *« ພວກເຈົ້າເປັນແສງສະ ວ່າງຂອງໂລກ »*. ໝາຍຄວາມວ່າແນວໃດ? ບໍ່ວ່າເກືອຫລືແສງສະວ່າງກໍລ້ວນແຕ່ເປັນສິ່ງສຳຄັນໃນການດຳລົງຊີວິດ ແລະໃນການສື່ສານກັບຄົນອ້ອມຂ້າງຂອງພວກເຮົາ. ແຕ່ສິ່ງທີ່ໜ້າຄິດໃນທີ່ນີ້ຄື ລົດເຄັມແລະແສງສະວ່າງບໍ່ໄດ້ມີໄວ້ ເພື່ອຕົວຂອງມັນເອງ ແຕ່ເພື່ອຄຸນປະໂຫຍດສຳລັບຄົນອື່ນ. ຕົວຢ່າງ: ເມື່ອພວກເຮົາທຳອາຫານຫລືຮັບປະທານ ອາຫານຫາກຂາດເກືອໄປ ອາຫານຂອງພວກເຮົາກໍຈະບໍ່ມີລົດຊາດ. ຖ້າໃນຫ້ອງ, ໃນເຮືອນຫລືໃນໝູ່ບ້ານຂອງພວກ ເຮົາຫາກບໍ່ມີແສງສະວ່າງ, ພວກເຮົາກໍຈະບໍ່ສາມາດເຫັນແຈ້ງແລະເດີນໃຫ້ຖືກທາງໄດ້. ໝາຍວ່າບໍ່ວ່າຈະເປັນເກືອ ຫລືແສງສະວ່າງກໍລ້ວນແຕ່ໃຫ້ຄຸນປະໂຫຍດແກ່ຄົນອື່ນ.

ແຕ່ຄຳຖາມທີ່ຕາມມາຄື ເຮັດແນວໃດພວກເຮົາຈະເປັນເກືອແລະແສງສະວ່າງຂອງໂລກໄດ້? ຫລືເວົ້າອີກ ຢ່າງ ເຮັດແນວໃດພວກເຮົາຈະສາມາດຊ່ວຍຄົນອື່ນໃຫ້ພົບກັບຄວາມໝາຍແລະແສງສະວ່າງໃນຊີວິດຂອງເຂົາໄດ້? ພວກເຮົາສາມາດພົບຄຳຕອບຂອງຄຳຖາມນີ້ໄດ້ໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກອີຊາຢາ. ປະພາສົກອີຊາ ຢາກ່າວກັບປະຊາກອນຂອງພຣະເຈົ້າວ່າ: *« ຈົ່ງແບ່ງປັນເຂົ້າຈີ່ໃຫ້ຜູ້ຫອດຫິວ, ຈົ່ງຮັບຕ້ອນຄົນທຸກຍາກບໍ່ມີບ່ອນຢູ່ ອາໄສ, ຈົ່ງທານເສື້ອຜ້າແກ່ຜູ້ເປືອຍເປົ່າ ແລະຢ່າຫລົບຫລີກເພື່ອນມະນຸດດ້ວຍກັນ »* (ອຊຢ 58, 7). ຖ້າເຈົ້າ ປະຕິບັດສິ່ງທີ່ກ່າວມານີ້ແລ້ວ, *« ຄວາມສະວ່າງຂອງເຈົ້າຈະສ່ອງແສງຮຸ່ງອອກມາເໝືອນດັ່ງແສງຕາເວັນພວມຂຶ້ນ ແລະບາດແຜຂອງເຈົ້າກໍຈະປິ່ງຊິ້ນຂຶ້ນມາໂດຍໄວ »* (ອຊຢ 58, 8). ໝາຍວ່າເກືອແລະແສງສະວ່າງທີ່ພວກເຮົາ ສາມາດນຳໄປໃຫ້ຄົນອື່ນນັ້ນຄືຄວາມຮັກເມດຕາຕໍ່ເພື່ອນມະນຸດດ້ວຍກັນນັ້ນເອງ. ເມື່ອພວກເຮົາປະຕິບັດດັ່ງນີ້ແລ້ວ, ປະພາສົກອີຊາຢາກ່າວຕໍ່ໄປວ່າ: *« ຖ້າຫາກເຈົ້າວອນຂໍນຳພຣະເຈົ້າ ພຣະອົງກໍຈະຕອບເຈົ້າ. ຫາກເຈົ້າຮ້ອງຫາພຣະ ເຈົ້າ, ພຣະອົງກໍຈະກ່າວກັບເຈົ້າວ່າ: ເຮົາຢູ່ນີ້ »* (ອຊຢ 58, 9). ໝາຍວ່າພຣະເຈົ້າຂອງພວກເຮົາເປັນອົງແຫ່ງຄວາມ ຮັກ ແລະຢູ່ບ່ອນໃດມີຄວາມຮັກ ພຣະອົງກໍຈະສະຖິດຢູ່ບ່ອນນັ້ນ. ແລະຖ້າພວກເຮົາປະຕິບັດຕາມຄຳສອນແຫ່ງຮັກ ຂອງພຣະອົງແລ້ວ ພຣະອົງກໍຈະປະທານຕາມສິ່ງທີ່ພວກເຮົາວອນຂໍເຊັ່ນດຽວກັນ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ເປັນເຄື່ອງມືແຫ່ງຄວາມຮັກຂອງພຣະເຈົ້າດ້ວຍການເປັນເກືອ ແລະແສງສະວ່າງສຳລັບເພື່ອນພີ່ນ້ອງຂອງພວກເຮົາ. ເປັນຕົ້ນຄົນທີ່ຕ້ອງການຄວາມຊ່ວຍເຫລືອຈາກພວກເຮົານັ້ນ ເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ